# ບົດທີ 8

# ຕີເອກອະນຸພາບໃນພະສັນຍາໃຫມ່




ຮູບນີ້ຈະກ່ຽວເລື່ອງຕີເອກອະນຸພາບຢ່າງໃດເນາະ!

ອີກບໍ່ດົນທ່ານເອງຈະຍົກຕົວຢ່າງນີ້ມາອະທິບາຍວ່າ ພະເຈົ້າທັງ 3 ພະພາກ ຈະຮວມກັນໃນການ ຊ່ອຍເຮົາໃຫ້ລອດພົ້ນໄດ້ຢ່າງໃດ?

ແຕ່ກ່ອນຈະເລີ້ມຕົ້ນຮຽນ ຈົ່ງອ້ອນວອນໃຫ້ພະເຈົ້າຊ່ອຍ!

**1** ຕັ້ງແຕ່ ບົດທີ 7 ທີ່ທ່ານຮຽນມາແລ້ວວ່າເດັກນ້ອຍຊາດຢິວທຸກຄົນຮຽນຮູ້ວ່າ "ພະຜູ້ເປັນເຈົ້າອົງດຽວເທົ່ານັ້ນທີ່ເປັນ ພະເຈົ້າຂອງເຮົາ" ຄວາມນັ້ນເຫັນໃນພະຄຳພີເດີມ ບົດໃດ ຂໍ້ໃດ?

_______________________________________________

**2** ພວກສາວົກຂອງພະເຢຊູເປັນຊາດຢິວທັງໝົດ ການນີ້ສະແດງວ່າເຂົາຮຽນຮູ້ຂໍ້ພະຄຳພີ ພະບັນຍັດສອງ 6:4 ຕັ້ງແຕ່ ເປັນເດັກມາ. ເຂົາເຊື່ອວ່າພະຜູ້ເປັນເຈົ້າມີຈັກອົງ? ____________

**3** ພວກສາວົກຢູ່ກັບພະເຢຊູດົນມາແລ້ວ ເຂົາຈຶ່ງຮູ້ສຶກວ່າພະອົງມີລັກສະນະນອກເໜືອຈາກມະນຸດທຳມະດາ. ຫຼັງຈາກ ການຄືນພະຊົນແລ້ວສາວົກຈຶ່ງຮັບຮູ້ວ່າ ພະອົງເປັນພະເຈົ້າແທ້.

ກ. ໃຫ້ອ່ານ ໂຢຮັນ 20:28 ໂທມາຕອບພະເຢຊູວ່າຢ່າງໃດ? (ຈົ່ງຕື່ມຄວາມທີ່ຂາດ) "ອົງ ________________ ຂອງຂ້າພະອົງແລະ ____________ ຂອງຂ້າພະອົງ".

ຂ. ໃນຊ່ອງວ່າງຕໍ່ໄປນີ້ໃຫ້ທ່ານສະເໜີຂໍ້ພະຄຳພີ 3 ຂໍ້ທີ່ເປັນຫຼັກຖານວ່າພະເຢຊູເປັນພະເຈົ້າ.

_______________________________________________

_______________________________________________

_______________________________________________

**4** ພວກສາວົກຮູ້ແຕ່ດົນແລ້ວວ່າພະເຈົ້າເປັນພະບິດາຂອງພະເຢຊູຄຣິດ ຫຼັງຈາກການຄືນພະຊົນ ເຂົາຮັບຮູ້ຊ້ຳອີກວ່າ ພະເຢຊູເອງເປັນ __________________ (ຕື່ມຄວາມທີ່ຂາດ)

**5** ຫຼັງຈາກພະວິນຍານບໍລິສຸດສະເດັດມາໃນວັນເພັນເຕຄໍສະເຕ ພວກສາວົກຍິ່ງເຂົ້າໃຈເລື່ອງຕີເອກອະນຸພາບ. ໃຫ້ອ່ານ ໃນພະທຳ ກຈກ 5:3-4

ກ. ໃນຂໍ້ 3 ບອກວ່າ ອານາເນຍຕົວະໃຜ? ____________________________

ຂ. ໃນຂໍ້ 4 ບອກວ່າເພິ່ນບໍ່ຕົວະມະນຸດ ແຕ່ຕົວະໃຜ? ______________________

**6** ຄືວ່າການຕົວະຕໍ່ພະວິນຍານບໍລິສຸດ ເປັນອັນດຽວກັນກັບການນຕົວະຕໍ່ໃຜ? _________ ໝາຍຄວາມວ່າ ພະວິນຍານບໍລິສຸດເປັນອັນໜຶ່ງອັນດຽວກັນກັບໃຜ? ____________

ຕອບ:

**1** *ພະບັນຍັດສອງ 6:4*

**2** *ອົງດຽວ*

**3** *ກ. ພະຜູ້ເປັນເຈາ... ພະເຈາ ຂ. ໃນບົດທີ 16 ໃນເຫຼັ້ມກ່ອນທ່ານໄດ້ຈົດ ຂໍ້ພະຄຳພີໃສ່ບ່ອນວ່າງກ່ອນ ມທ 1:1 ເອົາຄຳຕອບຈາກຂໍ້ພະຄຳພີເຫຼົ່ານັ້ນກໍໄດ*

**4** *ພະເຈາ*

**5** *ກ. ພະວິນຍານບໍລິສຸດ ຂ. ພະເຈາ*

**6** *ພະເຈາ ພະເຈາ*

**7** ກ. ພວກສາວົກຮັບຮູ້ວ່າພະເຢຊູເປັນພະບຸດຂອງໃຜ? ___________________________

ຂ. ໂທມາຮັບຮູ້ວ່າພະເຢຊູເປັນໃຜ? ________________________________________

ຄ. ເປໂຕຮັບຮູ້ວ່າພະວິນຍານບໍລິສຸດເປັນອັນດຽວກັນກັບໃຜ? _____________________

ຕໍ່ໄປພວກສາວົກທັງໝົດຮັບຮູ້ຢ່າງດຽວກັນກັບໂທມາ ແລະເປໂຕ!

**8** ຫຼັງຈາກການຄືນພະຊົນຂອງພະເຢຊູ ແລະການສະເດັດມາຂອງພະວິນຍານບໍລິສຸດໃນວັນເພັນເຕຄໍສະເຕ ພວກສາວົກ ຈຶ່ງຮັບຮູ້ແລ້ວວ່າ ພະເຈົ້າເປັນອົງດຽວທີ່ປະກອບດ້ວຍ 3 ພະພາກ. ເຂົາຮັບຮູ້ເລື່ອງຫຼັກໂອວາດໃດ? ___________________________________________

**9** ພວກສາວົກຄືຄົນຢິວທີ່ເຄີຍຮຽນຮູ້ເລື່ອງ ພະເຈົ້າ ໃນພະຄຳພີເດີມ. ເຂົາຮັບຮູ້ເລື່ອງ ພະເຈົ້າປະກອບດ້ວຍ 3 ພະກຄື: ຕີ ເອກອະນຸພາບ ໄດ້ງ່າຍ ຫຼືຍາກ? _______________________

**10** ແມ່ນເພາະເຫດໃດທີ່ຄົນຢິວບໍ່ຢາກເຊື່ອໃນຕີເອກອະນຸພາບ? _____________________

_____________________________________________________________________

**11** ເຖິງວ່າຄົນຢິວທົ່ວໄປຈະຮັບຮູ້ເລື່ອງພະເຈົ້າເປັນ 3 ພະພາກໃນອົງດຽວກັນກໍຕາມ ຜົນສຸດທ້າຍເຂົາຮັບຮູ້ແທ້ໃນປະສົບ ການຂອງເຂົາ ເມື່ອເຂົາເຫັນວ່າພະວິນຍານບໍລິສຸດເປັນພະເຈົ້າ ພະເຢຊູເປັນພະເຈົ້າ ພະບິດາກໍເປັນ ພະເຈົ້າ ອີກດ້ວຍ. (ໃຫ້ຕື່ມຄວາມທີ່ຂາດ)

ກ. ຄືວ່າພວກສາວົກມາຮັບຮູ້ເລື່ອງ 3 ພະພາກໃນພະເຈົ້າອົງດຽວເພາະເຂົາ ____________ ກິດຈະການທັງ 3 ພະພາກ ຂອງພະອົງ.

ຂ. ພວກສາວົກເປັນຄົນຢິວຊຶ່ງຮັບຮູ້ວ່າມີແຕ່ພະເຈົ້າ __________ . ໃນເວລາພະເຢຊູອອກໄປປະກາດພະທຳ ພວກສາວົກນັ້ນເຂົ້າໃຈວ່າພະເຢຊູເປັນພະບຸດຂອງ _____________ ຫຼັງຈາກການຄືນພະຊົນເຂົາຮັບຮູ້ວ່າພະເຢຊູເອງເປັນ _____________ ແທ້. ຫຼັງຈາກການສະເດັດມາຂອງ ພະວິນຍານບໍລິສຸດໃນວັນເພັນເຕຄໍສະເຕ ພວກສາວົກຮັບຮູ້ວ່າພະວິນຍານກໍເປັນ ______________ ເຫມືອນກັນ.

ຕອບ:

**7** *ກ. ພະເຈົາ ຂ. ພະເຈົາ ຄ. ພະເຈົາ*

**8** *ຕີເອກອະນຸພາບ*

**9** *ຍາກ*

**10** *(ບໍ່ມີຄຳຕອບຕາຍຕົວ)*

**11** *ກ. ເຫັນ. ຂ. ອົງດຽວ...ພະເຈົາ...ພະເຈົາ...ພະເຈົາ*

**12** ແນ່ນອນວ່າພວກສາວົກຈະເຂົ້າໃຈເລື່ອງຕີເອກອະນຸພາບຢ່າງເຕັມບໍລິບູນບໍ່ໄດ້ ເຊັ່ນດຽວກັນພວກເຮົາໃນເວລານີ້ກໍ ເຂົ້າໃຈບໍ່ເຕັມສ່ວນ. ພະຄໍາພີໃຫມ່ບໍ່ໄດ້ອະທິບາຍເລື່ອງຕີເອກອະນຸພາບ ພຽງແຕ່ເລື່ອງກິດຈະການຂອງທັງ 3 ພະ ພາກວ່າເປັນພະເຈົ້າອົງດຽວກັນ. ພວກສາວົກມີແຕ່ລາຍງານເລື່ອງປະສົບການທີ່ເຂົາພົບແລະສິ່ງທີ່ເຂົາເຫັນກັບຕາ.

ກ. ໃຫ້ທ່ານຍົກຂໍ້ພະຄໍາພີທີ່ເປັນຫຼັກວ່າພະເຢຊູເປັນພະເຈົ້າ? ____________________

ຂ. ໃຫ້ຍົກຂໍ້ພະຄໍາພີທີ່ເປັນຫຼັກຖານວ່າພະວິນຍານບໍລິສຸດເປັນພະເຈົ້າ? ____________

**13** ຕົວຢ່າງໃນໜ້າປົກ ບົດທີ 8 ນີ້ເປັນທີ່ສະແດງປະສົບການທີ່ສາວົກພົບເຫັນວ່າ ພະເຈົ້າອົງດຽວປະກອບດ້ວຍ 3 ພະ ພາກ ພວກເຮົາອາດຈະມີປະສົບປະການຄ້າຍຄືກັບເຂົາອີກດ້ວຍ. ໃຫ້ທ່ານເປີດເບິ່ງໜ້າປົກບົດນີ້ ຮູບນັ້ນສະແດງ ເຖິງຫຍັງ? (ເລືອກ)

ກ. ຕີເອກອະນຸພາບ

ຂ. ລັກສະນະຂອງພະເຢຊູ

ຄ. ການທີ່ພະເຢຊູເປັນມະນຸດ

**14** ໃຫ້ອ່ານ Iເປໂຕ 1:1-2 ຂໍ້ນັ້ນບອກວ່າ “ຜູ້ທີ່ພະເຈົ້າ ____________ ໄດ້ຊົງເລືອກໄວ້ແລ້ວ”

**15** ບໍ່ມີຄົນຈັກຄົນດຽວທີ່ມີສິດໄດ້ລອດດ້ວຍຕົນເອງ. Iເປໂຕ 1:1-2 ບອກວ່າ ພະບິດາໄດ້ຊົງເລືອກເຮົາໃຫ້ລອດໂດຍ ພະເຢຊູຄຣິດ. ໃນ 3 ພະພາກຂອງພະເຈົ້ານັ້ນແມ່ນພະພາກໃດທີ່ເລືອກເຮົາໄວ້? ________________________________________________

**16** ແຕ່ກ່ອນພະເຢຊູບໍ່ໄດ້ເຂົ້າມາໃນໂລກເທື່ອ ພະບິດາເຈົ້າມີສ່ວນໃດໃນການໃຫ້ເຮົາລອດພົ້ນ?

____________________________________________________________

**17** ໃຫ້ທ່ານເບິ່ງໜ້າປົກບົດນີ້ ໃນ 3 ຄົນນັ້ນຄື: ຮູບ ກ. ຂ. ແລະ ຄ. ແມ່ນຄົນໃດທີ່ປຽບເຫມືອນພະບິດາ? ____________________________________________________

**18** ໃຫ້ອ່ານ I ເປໂຕ 1:1-2 ອີກເທື່ອຫນຶ່ງ ເທື່ອນີ້ໃຫ້ທ່ານຊອກຫາຄວາມທີ່ວ່າດ້ວຍພະບຸດ.

ກ. ຂໍ້ສອງບອກວ່າ ຈະໃຫ້ຮັບການຊິດດ້ວຍພະໂລຫິດຂອງໃຜ? __________________

ຂ. ການນັ້ນອ້າງເຖິງເຫດການໃດ? ____________________________________

ຕອບ:

***12*** *ກ. ໂຢຮັນ 20:28 (ຫຼືຂໍ້ອື່ນໆ ທີ່ຖືກ) ຂ. ກຈກ 5:3-4*

***13*** *ກ. ຖືກ*

***14*** *ພະບິດາ*

***15*** *ພະບິດາ*

***16*** *ຊົງເລືອກໄວ້*

***17*** *ຮູບ ຂ.*

***18*** *ກ. ພະເຢຊູ (ຫຼື ພະອົງ) ຂ. ທີ່ພະເຢຊູຕາຍແທນເຮົາ*

**19** ພະຄຳພີສອນວ່າ ໂລຫິດຂອງພະເຢຊູໄຫຼໄປເພື່ອໄຖ່ໂທດບາບເຮົາ. ໃນຮູບນັ້ນແມ່ນຄົນໃດທີ່ປຽບທຽບພະເຢຊູມາໄຖ່ ໂທດແທນເຮົາ? ________________________________

**20** ໃຫ້ອ່ານ I ເປໂຕ 1:1-2 ອີກ

ກ. ພະບິດາເຮັດຢ່າງໃດໃນການໃຫ້ເຮົາລອດໄດ້? ______________________

ຂ. ພະບຸດເຮັດຢ່າງໃດໃນການໃຫ້ເຮົາລອດໄດ້? ______________________

**21** ໃຫ້ກັບໄປເບິ່ງຮູບອີກເທື່ອໜຶ່ງ.

ກ. ທ່ານ "ຂ" ທີ່ເລືອກເຮືອນໄວ້ປຽບທຽບກັບໃຜ? ______________________

ຂ. ທ່ານ "ກ" ທີ່ຊື້ເຮືອນໄວ້ປຽບທຽບກັບໃຜ? ______________________

ຄ. ແຕ່ທ່ານ "ຄ" ທີ່ເຂົ້າໄປປະຈຳໃນເຮືອນນັ້ນປຽບທຽບກັບໃຜ? ______________

**22** I ເປໂຕ 1:1-2 ຍັງເວົ້າອີກກ່ຽວກັບພະວິນຍານບໍລິສຸດດ້ວຍວ່າ ພະອົງຊົງຊຳລະໃຫ້ເຮົາບໍລິສຸດ.

ກ. ໃນຮູບ 3 ຄົນນັ້ນແມ່ນຄົນໃດ (ທ່ານ ກ, ຂ ຫຼື ຄ) ເຂົ້າໄປໃນເຮືອນຮັບພາລະວ່າເປັນເຈົ້າຂອງ? ________________________________________________

ຂ. ໃນ 3 ພະພາກຂອງພະເຈົ້າ ແມ່ນໃຜເຂົ້າໄປເປັນເຈົ້າຂອງໃນຄົນທີ່ເຊື່ອ? __________

ຄ. ຂໍໃຫ້ທ່ານສະເໜີຂໍ້ພະຄຳພີທີ່ເປັນຫຼັກວ່າ ພະວິນຍານບໍລິສຸດເປັນພະເຈົ້າ? ________

**23** ກ. ພະບິດາມີສ່ວນຢ່າງໃດ ໃນການໃຫ້ລອດພົ້ນ? ______________________

ຂ. ພະບຸດມີສ່ວນຢ່າງໃດ ໃນການໃຫ້ລອດພົ້ນ? ______________________

ຄ. ພະວິນຍານມີສ່ວນຢ່າງໃດ ໃນການໃຫ້ລອດພົ້ນ? ______________________

**24** ແມ່ນຂໍ້ໃດໃນພະຄຳພີທີ່ເວົ້າເຖິງພາລະຂອງທັງ 3 ພະພາກໃນການໃຫ້ລອດພົ້ນ? ______

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວແຕ້ມຮູບໃບໄມ້ທີ່ເປັນ 3 ແງ່ ຂ້າງ I ເປໂຕ 1:1-2 |

**25** ໃຫ້ທ່ານເປີດອ່ານຈາກ I ກລທ 6:19-20 ໃນຄວາມປຽບທຽບທີ່ໄດ້ຍົກມາຈາກໜ້າປົກ ບົດທີ 8 ນີ້ ເຮົາໄດ້ຍົກ ເອົາເຮືອນຄົນມາເປັນຕົວຢ່າງໃນຊີວິດຄຣິສຕຽນ. ອາຈານໂປໂລບອກວ່າຮ່າງກາຍຂອງຄຣິສຕຽນເຮົາຄືຫຍັງ? ________________________________

ຕອບ:

**19** *ທ່ານ ກ.*

**20** *ກ. ເລືອກໄວ້* *ຂ. ໄຖ່ໂທດ*

**21** *ກ. ພະບິດາ* *ຂ. ພະບຸດ* *ຄ. ພະວິນຍານບໍລິສຸດ*

**22** *ກ. ທ່ານ ຄ.* *ຂ. ພະວິນຍານບໍລິສຸດ* *ຄ. ກຈກ 5:3-4*

**23** *ກ. ພະບິດາເລືອກເຮົາໄວ້ແລ້ວ* *ຂ. ພະບຸດໄຖ່ໂທດບາບເຮົາ* *ຄ. ພະວິນຍານເຂົາໄປເປັນເຈາຂອງເຮົາ*

**24** *I ເປໂຕ 1:1-2*

**25** *ພະວິຫານຂອງພະວິນຍານບໍລິສຸດ*

**26** ແມ່ນໃຜເຂົ້າມາຢູ່ໃນຊີວິດຄຣິສຕຽນ ແລະປະຈຳໃນຊີວິດຄຣິສຕຽນເໝືອນຢ່າງປະຈຳໃນພະວິຫານ? ______________________________

**27** I ກລທ 6:19-20 ຄຣິສຕຽນບໍ່ເປັນເຈົ້າຂອງຕົວເອງຕໍ່ໄປແລ້ວ ເພາະພະເຈົ້າໄດ້ຊື້ໄວ້ດ້ວຍລາຄາສູງ.

ກ. ແມ່ນພະພາກໃດໃນຕີເອກອະນຸພາບທີ່ໄຖ່ເຮົາໄວ້ດ້ວຍລາຄາສູງ? ____________

ຂ. ພະອົງໄຖ່ເຮົາດ້ວຍລາຄາສູງນັ້ນໃນເຫດການໃດ? ____________

**28** ໃນຕອນສຸດທ້າຍຂອງ I ກລທ 6:20 ນັ້ນບອກວ່າເຮົາຈົ່ງ

ກ. ຖະຫວາຍພະກຽດຕໍ່ໃຜ? ____________

ຂ. ຈົ່ງຖະຫວາຍດ້ວຍຫຍັງ? ____________

**29** ເພື່ອຈະປະຕິບັດຊີວິດຄຣິສຕຽນໄດ້ ເຮົາຄວນຈະເຂົ້າໃຈເລື່ອງພາລະຂອງແຕ່ລະພາກຂອງພະເຈົ້າ ໃນການໃຫ້ເຮົາ ໄດ້ລອດພົ້ນບາບ.

ກ. ພະບິດາເຮັດຫຍັງກ່ອນ? ____________

ຂ. ພະບຸດເຮັດຫຍັງ? ____________

ຄ. ພະວິນຍານເຮັດຫຍັງ? ____________

ງ. ເຮົາເຫັນ 3 ພະພາກຮ່ວມກັນໃນການໃຫ້ເຮົາລອດພົ້ນບາບໃນພະທຳໃດ ບົດໃດ ຂໍ້ໃດ?

______________________________

ຈ. ໃນ I ກລທ 6:20 ພວກຄຣິສຕຽນເຮົາຈົ່ງຖະຫວາຍກຽດຕໍ່ໃຜ? ____________

**30** ມີຫຼັກຖານໃນພະຄຳພີເດີມວ່າ ພະເຈົ້າອົງດຽວທີ່ພວກຄົນຢິວນັບຖືນັ້ນຊົງປະກອບດ້ວຍ 3 ພະພາກທີ່ຮວມເປັນອັນ ດຽວກັນ. ໃນ I ເປໂຕ 1:1-2 ເຮົາເຫັນ 3 ພະພາກຄື:
(ຈົ່ງຕື່ມຄວາມທີ່ຂາດ)

ກ. ເຮົາຖືກເລືອກໄວ້ດ້ວຍ ____________

ຂ. ຮັບການຊິດດ້ວຍພະໂລຫິດຂອງ ____________

ຄ. ____________ ຊົງຊຳຮະເຮົາໃຫ້ບໍລິສຸດ.

ຕອບ:

**26** *ພະວິນຍານບໍລິສຸດ*

**27** *ກ. ພະບຸດ (ພະເຢຊູ)* *ຂ. ໃນເວລາຕາຍທີ່ໄມ້ກາງແຂນ*

**28** *ກ. ຕໍ່ພະເຈົາ* *ຂ. ຖະຫວາຍດ້ວຍຮ່າງກາຍ*

**29** *ກ. ເລືອກໄວ້* *ຂ. ໄຖ່ບາບໃຫ້ເຮົາ* *ຄ. ເຂົາມາຢູ່ໃນເຮົາ* *ງ. I ເປໂຕ 1:1-2* *ຈ. ຕໍ່ພະເຈົາ*

**30** *ກ. ພະບິດາ* *ຂ. ພະບຸດ (ພະເຊຢູ)* *ຄ. ພະວິນຍານບໍລິສຸດ*

**31** ທັງການນິລະມິດສ້າງໂລກ ແລະການໃຫ້ເຮົາລອດພົ້ນບາບເປັນກິດຈະການຂອງພະເຈົ້າ ທັງ 3 ພະພາກຄື _______________ _______________ ແລະ ______________________

**32** ທ່ານຈື່ເຫດການທີ່ພະເຢຊູຮັບສິນບັບຕິສະມາໃນຕົ້ນສະໄຫມປີທີ່ຕຽມຕົວບໍ່, ເຫດການນັ້ນພົບໃນພະທຳມັດທາຍ ບົດ ໃດຂໍ້ໃດ?_______________________________________________
ໃນເຫດການນັ້ນເຮົາເຫັນພະເຈົ້າປາກົດມາທັງ 3 ພະພາກຄື: ______________________
_______________________________ ແລະ _________________________________

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວແຕ້ມໃບໄມ້ທີ່ເປັນ 3 ແງ່ ປຽບທຽບ ຕີເອກອະນຸພາບ ຂ້າງຂໍ້ພະຄຳພີເຫຼົ່ານັ້ນ. |

**33** ໃຫ້ອ່ານ ມທ 28:19 (ແລ້ວຕື່ມໃສ່ບ່ອນວ່າງໃຫ້ຖືກ) ກ່ອນຈະສະເດັດຂຶ້ນສູ່ຟ້າສະຫວັນ ພະອົງສັ່ງສາວົກໃຫ້ໄປເຖິງ ທຸກຊາດໃຫ້ເຂົາຮັບ _________________________ ໃນພະນາມແຫ່ງ
___________________ __________________ ແລະ ________________________

**34** ຄຳສັ່ງຂອງພະເຢຊູນັ້ນທີ່ຈະໃຫ້ຄົນທຸກຊາດຮັບບັບຕິສະມາໃນພະນາມແຫ່ງ ພະບິດາພະບຸດ ແລະ ພະວິນຍານບໍລິສຸດ.
ກ. ສະແດງຫຼັກໂອວາດກ່ຽວກັບຫຍັງ? _______________________________________
ຂ. ພະເຈົ້າມີຈັກອົງ? ___________________________________________________
ຄ. ປາກົດມາໃນຈັກພະພາກ? ____________________________________________

**35** ໃນເມື່ອເວລາພະເຢຊູຮັບບັບຕິສະມາເຮົາເຫັນທັງ 3 ພະພາກຂອງພະເຈົ້າປາກົດມາ. ເວລາໃດທີ່ລູກສິດຂອງພະອົງ ຈະຮັບບັບຕິສະມາເຂົາຮັບຮູ້ຕີເອກອະນຸພາບ ເພາະເຂົາຮັບບັບຕິສະມາໃນ... (ໃຫ້ຫມາຍເອົາຂໍ້ທີ່ຖືກ)
ກ. ພະພາກນຶ່ງໃນຕີເອກອະນຸພາບ
ຂ. ສອງພະພາກໃນຕີເອກອະນຸພາບ
ຄ. ທັງສາມພະພາກ

ຕອບ:

***31*** *ພະບິດາ ພະບຸດ ແລະ ພຣະວິນຍານບໍລິສຸດ*
***32*** *ມັດທາຍ 3:13-17 ພະບິດາ ພະບຸດ ແລະ ພະວິນຍານບໍລິສຸດ*
***33*** *ບັບຕິສະມາ...ພະບິດາ ພະບຸດ... ພະວິນຍານບໍລິສຸດ*
***34*** *ກ. ຕີເອກອະນຸພາບ ຂ. ອົງດຽວ ຄ. 3 ພະພາກ*
***35*** *ຄ.ຖືກ*

**36** ພິທີຮັບສິນບັບຕິສະມາຂອງຄຣິສຕຽນບໍ່ເໝືອນພິທີຮັບສິນອື່ນໆ ເພາະວ່າເປັນພິທີທີ່ຮັບໃນພະນາມແຫ່ງ ________________ ________________ ແລະ ______________________ ຄື ຕີເອກອະນຸພາບ. (ຈົ່ງຕື່ມຄວາມທີ່ຂາດ)

**37** ຖ້າມີຄົນໃດທີ່ອ້າງວ່າເປັນຄຣິສຕຽນ ແຕ່ເຂົາບໍ່ຮັບຮູ້ວ່າພະເຢຊູເປັນພະເຈົ້າ ເຂົາຈະຮັບບັບຕິສະມາໃນນາມແຫ່ງພະ ບຸດໄດ້ບໍ່? ______________________________________________

**38** ແມ່ນສອງຈຳພວກຕໍ່ໄປນີ້ທີ່ຮັບຮູ້ວ່າ ພະເຢຊູເປັນພະເຈົ້າ. (ໃຫ້ໝາຍ √ ໃສ່ຂໍ້ທີ່ຖືກ X ໃສ່ຂໍ້ທີ່ຜິດ)

________ ກາໂຕລິກ ________ ຄຣິສຕຽນ

________ ຄົນຢິວ ________ ສາດສະໜາພຸດ

**39** ຍັງມີອີກບາງຈຳພວກທີ່ບໍ່ເຊື່ອວ່າ ພະວິນຍານບໍລິສຸດເປັນພະເຈົ້າ. ເພາະເຄີຍມີຈຳພວກໜຶ່ງທີ່ປ່າວປະກາດກັບຄົນ ລາວວ່າ ພະບິດາຄືພະເຈົ້າໃຫຍ່, ພະເຢຊູຄຣິດເປັນພະເຈົ້າຢູ່ ແຕ່ບໍ່ໃຫຍ່ເທົ່າກັບພະບິດາ. ແຕ່ເຂົາບໍ່ເຊື່ອວ່າ ພະ ວິນຍານເປັນພະເຈົ້າເລີຍ. ເຂົາປະຕິເສດບໍ່ເຊື່ອຫຼັກໂອວາດໃດ? ______________________________________________________________

**40** ໃນລາຍຊື່ດັ່ງຕໍ່ໄປນີ້ ໃຫ້ທ່ານໝາຍ √ ໃສ່ຈຳພວກທີ່ເຊື່ອໃນຕີເອກອະນຸພາບ ແລະ X ໃສ່ຈຳພວກທີ່ບໍ່ເຊື່ອ.

______ ກ. ຄຣິສຕຽນຂ່າວປະເສີດ

______ ຂ. ສາດສະໜາຢິວ

______ ຄ. ໜໍຜີ

______ ງ. ກາໂຕລິກ

______ ຈ. ສາດສະໜາພາມ

______ ສ. ຄຣິສຕຽນໂບດວັນເສົາ

**41** ສາດສະໜາພາມ ສາດສະໜາພຸດ ແລະ ສາດສະໜາຢິວສອດຄ່ອງກັນໃນດ້ານໃດ?

______________________________________________________________________

ຕອບ:

***36*** *ພະບິດາ ພະບຸດ ແລະ ພະວິນຍານບໍລິສຸດ*

***37*** *ບໍ່*

***38*** *ກາໂຕລິກ ແລະ ຄຣິສຕຽນ ຖືກ*

***39*** *ບໍ່ເຊື່ອໃນຕີເອກອະນຸພາບ*

***40*** *ກ. ງ. ແລະ ສ.ຖືກ*

***41*** *ປະຕິເສດບໍ່ຮັບຮູ້ຕີເອກອະນຸພາບ*

**42** ຖ້າທ່ານຈະສອນເລື່ອງຕີເອກອະນຸພາບຈາກພະຄຳພີ ທ່ານຈະຍົກເລື່ອງໃດຕໍ່ໄປເພື່ອເປັນຫຼັກຖານ? (ໃຫ້ໝາຍ √ ໃສ່ຂໍ້ທີ່ຖືກ ແລະ X ໃສ່ຂໍ້ທີ່ຜິດ)

______ ກ. ມັດທາຍຜູ້ເກັບພາສີ

______ ຂ. ທີ່ເຫັນ 3 ພະພາກຂອງພະອົງປາກົດມາເວລາພະເຢຊູຮັບບັບຕິສະມາ

______ ຄ. ເຮໂລດຜູ້ຍິ່ງໃຫຍ່

______ ງ. ການຫວ່ານພືດ

______ ຈ. ຕີເອກອະນຸພາບໃນການລອດພົ້ນຈາກບາບ

______ ສ. ມັດທາຍ 28:19

**43** ກ. ສ່ວນຂອງພະບິດາ ໃນການໃຫ້ລອດພົ້ນຄືຫຍັງ? ______________________________

ຂ. ສ່ວນຂອງພະບຸດ ໃນການໃຫ້ລອດພົ້ນຄືຫຍັງ? ______________________________

ຄ. ສ່ວນຂອງພະວິນຍານບໍລິສຸດ ໃນການໃຫ້ລອດພົ້ນຄືຫຍັງ? ____________________

ງ. ເລື່ອງຕີເອກອະນຸພາບໃນການໃຫ້ລອດພົ້ນຈາກຄວາມຜິດບາບຢູ່ໃນພະທຳໃດ ບົດໃດ ຂໍ້ໃດ? ____________________________________________________________

ຕອບ:

**42** *ຂ. ຈ. ແລະ ສ.ຖືກ*

**43** *ກ. ເລືອກໄວ້ ຂ. ໄຖ່ໂທດບາບ ຄ. ເຂົາມາປະຈຳຢູ່ໃນເຮົາ ງ. I ເປໂຕ 1:1-2*